ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ : 752 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 30 ພະຈິກ 2007

## ຂໍ້ຕົກລົງ
## ວ່າດ້ວຍຫລັກຊັບຄໍ້າປະກັນ

- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວ ສະບັບເລກທີ 05/ ສພຊ ລົງວັນທີ 14 ຕຸລາ 1999.
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006.
- ອີງຕາມການເຫັນດີເປັນເອກະພາບຂອງກອງປະຊຸມວິຊາການເພື່ອປຶກສາຫາລືແກ້ໄຂບາງບັນຫາທີ່ທະນາຄານປະສົບຢູ່ໃນປະຈຸບັນ ຄັ້ງວັນທີ 29 ພະຈິກ 2007.

ຜູ້ວ່າການທະນາຄານ ແຫ່ງ ສປປລາວ ຕົກລົງ:

ມາດຕາ 1: ໃຫ້ລົບລ້າງການປ່ອຍກູ້ບໍ່ເກີນຫລັກຊັບຄໍ້າປະກັນ 90%. ສໍາລັບການພິຈາລະນາອະນຸມັດສິນເຊື່ອຂອງທະນາຄານທຸລະກິດໃນຕໍ່ໜ້າແມ່ນໃຫ້ອີງໃສ່ປະສິດທິຜົນຂອງໂຄງການເປັນອັນຕົ້ນຕໍ ສ່ວນຫລັກຊັບຄໍ້າປະກັນນັ້ນໃຫ້ຂຶ້ນກັບດຸນພິນິດຂອງທະນາຄານທຸລະກິດເອງ ຖ້າໂຄງການມີປະສິດທິຜົນ, ຫລັກຊັບບໍ່ພຽງພໍ ກໍ່ສາມາດປ່ອຍເງິນກູ້ໄດ້.

ມາດຕາ3: ໃຫ້ສໍານັກງານໃຫຍ່ຂອງທະນາຄານທຸລະກິດ ຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງຖືກຕ້ອງ.

ມາດຕາ 4: ໃຫ້ຫ້ອງການ, ກົມຄຸ້ມຄອງທະນາຄານທຸລະກິດແລະສະຖາບັນການເງິນ, ບັນດາທະນາຄານທຸລະກິດ ຈົ່ງຮັບຮູ້ ແລະປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງອດ.

ມາດຕາ 5: ຂໍ້ຕົກລົງ, ບົດແນະນໍາ ແລະ ລະບຽບຫລັກການໃດທີ່ຂັດກັບຂໍ້ຕົກລົງ ສະບັບນີ້ລ້ວນແຕ່ຖືກຍົກເລີກ. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ພູເພັດ ຄໍາພູນວົງ

ບ່ອນສົ່ງ:
- ບັນດາກົມແລະຫ້ອງການ ພາຍໃນ ທຫລ 1 ສະບັບ
- ທະນາຄານທຸລະກິດ 1 ສະບັບ

ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la